Oregon Health Authority

# ການສ້າງແຜນຄວບຄຸມສັດລົບກວນຂອງທ່ານ

ຖ້າທ່ານຢາກມີສະຖານທີ່ນັ່ງກິນເຂົ້າກາງແຈ້ງ, ກົດລະບຽບກໍານົດໃຫ້ມີແຜນການຄວບຄຸມສັດລົບກວນທີ່ໄດ້ຮັບການອະນຸມັດຈາກພະແນກສາທາລະນະສຸກກ່ອນທີ່ຈະມີການດໍາເນີນການໃນລັກສະນະນີ້ (OAR 333-150-0000, ພາກທີ 6-202.15). ຄູ່ມື/ຄໍາຖາມລຸ່ມນີ້ຈະຊ່ວຍທ່ານໃນການພັດທະນາແຜນການຄວບຄຸມສັດລົບກວນສໍາລັບພື້ນທີ່ຂອງທ່ານພ້ອມນັ້ນຍັງເລີ່ມຂັ້ນຕອນການສົນທະນາກັບພະແນກສາທາລະນະສຸກຢູ່ໃນເຂດຂອງທ່ານ.

1. ສ້າງແຜນວາດເພື່ອສະແດງວ່າທ່ານຈະເປີດສະຖານທີ່ຂອງທ່ານເພື່ອໃຫ້ມີບ່ອນຮັບປະທານອາຫານທີ່ໂລ່ງ.

2. ທ່ານຈະປົກປ້ອງເຂດກະກຽມ ແລະ ເຂດເກັບມ້ຽນອາຫານຂອງທ່ານແນວໃດເມື່ອສະຖານທີ່ຂອງທ່ານມີເຂດໂລ່ງໄປຫາບ່ອນທາງນອກ? ຍົກຕົວຢ່າງ, ນໍາໃຊ້ຜ້າກັ້ງອາກາດ, ພັດລົມ, ຕາໜ່າງ, ອື່ນໆ...

3. ທ່ານໄດ້ມອບໝາຍໃຫ້ໃຜຜູ້ໜຶ່ງຮັບຜິດຊອບໃນການກວດກາເຂດທີ່ເປັນບ່ອນໂລ່ງໄປຫາທາງນອກເປັນປະຈໍາບໍ່ເມື່ອສະຖານທີ່ຂອງທ່ານກໍາລັງດໍາເນີນໃນຮູບແບບນີ້?

4. ທ່ານໄດ້ມີລາຍການກວດກາທີ່ຜູ້ຮັບຜິດຊອບຂອງທ່ານຈະໄດ້ນໍາໃຊ້ໃນຂະນະທີ່ກວດກາເຂດເປີດໂລ່ງໄປຫາທາງນອກ, ລວມເຖິງເຂົາເຈົ້າໄດ້ເຮັດການປະເມີນເຂດດັ່ງກ່າວເລື້ອຍປານໃດ?

5. ຕາຕະລາງອະນາໄມຂອງທ່ານມີຄືແນວໃດແດ່ ແລະ ມັນຈະຫຼຸດຜ່ອນແຫຼ່ງອາຫານ ແລະ ເປັນບ່ອນລີ້ຊ່ອນຂອງສັດລົບກວນແນວໃດ? ທ່ານມີຕາຕະລາງອານາໄມ ຫຼື ລາຍການທີ່ພະນັກງານຈະນໍາໃຊ້ຢູ່ໃນເຂດທີ່ເປີດໂລ່ງໄປຫາພາຍນອກບໍ່?

6. ແມ່ນຫຍັງແດ່ທີ່ຕ້ອງໄດ້ເຮັດຖ້າທ່ານເຫັນວ່າມີສັດລົບກວນຢູ່ໃນສະຖານທີ່ຂອງທ່ານ? ທ່ານຕ້ອງສາມາດປິດບ່ອນທີ່ສາມາດເປີດໄດ້ຈົນກວ່າສັດລົບກວນຖືກກໍາຈັດອອກໄປ.

7. ທ່ານມີຜູ້ຊ່າງກໍາຈັດສັດລົບກວນທີ່ຢູ່ໃນສັນຍາຂອງທ່ານຫຼືບໍ່? ຖ້າມີ, ໃຫ້ເອົາຊື່ ແລະ ເບີໂທຂອງເຂົາເຈົ້າໃຫ້ແກ່ພະແນກສາທາລະນະສຸກໃນເຂດຂອງທ່ານ.